**ບົດຖະແຫຼງຂ່າວ: ພິທີເປີດ ເວັບໄຊການຊ່ວຍເຫຼືອທາງດ້ານກົດໝາຍຜ່ານລະບົບດິຈິຕອນ**
**ວັນທີ 5 ພະຈິກ 2021 (ຜູ້ເຂົ້າຮ່ວມຜ່ານທາງອອນລາຍ ແລະ ຜູ້ເຂົ້າຮ່ວມຕົວຈິງ)**
**ທີ່ ນະຄອນຫຼວງວຽງຈັນ, 5 ພະຈິກ 2021**

ເວັບໄຊການຊ່ວຍເຫຼືອທາງດ້ານກົດໝາຍທີ່ພັດທະນາຂຶ້ນໃໝ່ນີ້ ແມ່ນເພື່ອເສີມສ້າງການເຂົ້າເຖິງການບໍລິການທາງດ້ານກົດໝາຍຂອງປະຊາຊົນ ແລະ ເປັນການພັດທະນາດິຈິຕອນ ໃນ ສປປ ລາວ.

ໃນໄລຍະໜຶ່ງປີ ທີ່ມີການພັດທະນາເວັບໄຊການຊ່ວຍເຫຼືອທາງດ້ານກົດໝາຍ ຂອງ ສປປ ລາວ ເວັບໄຊການຊ່ວຍເຫຼືອດັ່ງກ່າວກໍໄດ້ສ້າງສຳເລັດ ແລະ ເປີດ ໃຫ້ການບໍລິການ ແລະ ໃຫ້ຄຳປຶກສາ ທາງດ້ານກົດໝາຍແກ່ປະຊາຊົນ ໂດຍສະເພາະແມ່ນກຸ່ມຄົນທີ່ມີຄວາມສ່ຽງ ແລະ ປະຊາຊົນທີ່ຢູ່ເຂດຫ່າງໄກຊອກຫຼີກພາຍໃນທົ່ວປະເທດ. ການຊ່ວຍເຫຼືອທາງດ້ານກົດໝາຍນີ້ແນ່ໃສ່ ເພື່ອເພີ່ມຊ່ອງທາງການເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ ໂດຍການໃຫ້ການບໍລິການຂອງຫ້ອງການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍຂອງ ກະຊວງ ຍຸຕິທຳ ແລະ ພະແນກຍຸຕິທຳໃນບັນດາແຂວງທົ່ວປະເທດ ເຊິ່ງປະຈຸບັນກຳລັງດຳເນີນການທົດລອງໃນ 4 ແຂວງຄື: ແຂວງ ຊຽງຂວາງ, ແຂວງ ສະຫວັນນະເຂດ, ແຂວງ ອັດຕະປື ແລະ ແຂວງ ເຊກອງ.

ດຳລັດ ວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ ສະບັບເລກທີ 77/ລຖບ ໄດ້ກຳນົດໃຫ້ສ້າງຈັດຕັ້ງຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ພ້ອມທັງຍົກສູງການບໍລິການ ແລະ ຂັ້ນຕອນຂອງການຊ່ວຍເຫຼືອທາງດ້ານກົດໝາຍ. ເວັບໄຊໃຫ້ການຊ່ວຍເຫຼື່ອທາງດ້ານກົດໝາຍນີ້ ຖືເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ຍັງສອດຄ່ອງກັບແຜນຂອງລັດຖະບານ ເພື່ອສົ່ງເສີມການຫັນເປັນດິຈິຕອນ.

ໃນ ພິທີເປີດເວັບໄຊການຊ່ວຍເຫຼືອທາງດ້ານກົດໝາຍມື້ນີ້, ຮອງລັດຖະມົນຕີ ກະຊວງຍຸດຕິທຳ ທ່ານ ບຸນທາ ຊົງເບີເທົາ ໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງເວັບໄຊການຊ່ວຍເຫຼືອທາງດ້ານກົດໝາຍຜ່ານລະບົບດິຈິຕອນ ທີ່ໄດ້ເອື້ອຍອຳນວຍ ແລະ ສົ່ງເສີມໃຫ້ແກ່ລະບົບຄວາມຍຸຕິທຳຂອງ ສປປ ລາວ ໂດຍສະເພາະແມ່ນ ຕອບສະໜອງຄວາມຕ້ອງການການຊ່ວຍເຫຼືອທາງດ້ານກົດໝາຍ ແກ່ກຸ່ມຄົນຜູ້ດ້ອຍໂອກາດທີ່ຢູ່ໄກ ແລະ ບໍ່ສາມາດເຂົ້າເຖິງການບໍລິການໄດ້. ສຸດທ້າຍທ່ານຮອງລັດຖະມົນຕີກະຊວງຍຸຕິທຳໄດ້ກ່າວສະຫຼຸບວ່າ: "ການເປີດການຊ່ວຍເຫຼືອທາງດ້ານກົດໝາຍແມ່ນເປັນພຽງການເລີ່ມຕົ້ນເທົ່ານັ້ນ ຍັງມີຫຼາຍບັນຫາ ແລະ ສິ່ງທ້າທາຍ ທີ່ລໍຖ້າໃຫ້ພວກເຮົາສືບຕໍ່ແກ້ໄຂ ເພື່ອຮັບປະກັນການເຂົ້າເຖິງ, ຄວາມຍືນຍົງ ແລະ ຄຸນນະພາບຂອງການບໍລິການຊ່ວຍເຫຼືອທາງດ້ານກົດໝາຍ," ແລະ ເວັບໄຊການຊ່ວຍເຫຼືອທາງດ້ານກົດໝາຍຜ່ານລະບົບດິຈິຕອນນີ້ ຖືເປັນໜຶ່ງຊ່ອງທາງໃນການແກ້ໄຂບັນດາສິ່ງທ້າທາຍເຫຼົ່ານັ້ນ.

ຮອງຜູ້ຕ່າງໜ້າ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທ່ານ ນາງ ແຄັດເທີລີນ ຟົງ ໄດ້ຊົມເຊີຍລັດຖະບານລາວ ໂດຍສະເພາະແມ່ນ ກະຊວງ ຍຸດຕິທຳ ຕໍ່ຄຳໝັ້ນສັນຍາ ທີ່ຈະກ້າວໄປສູ່ການປົກຄອງແບບທັນສະໄໝ(ດິຈິຕອນ) ແລະ ການໃຫ້ການບໍລິການຜ່ານທາງດິຈິຕອນ. ທ່ານ ຍັງໄດ້ເນັ້ນວ່າ: "ການຊ່ວຍເຫຼືອທາງດ້ານກົດໝາຍຜ່ານລະບົບດິຈິຕອນ ແມ່ນເປັນໂອກາດໃນການເສີມສ້າງການສະໜອງ ການບໍລິການທາງດ້ານກົດໝາຍສຳລັບຄົນກຸ່ມທີ່ມີຄວາມສ່ຽງ ແລະ ກຸ່ມຄົນທີ່ເຂົ້າເຖິງຍາກ ໂດຍສະເພາະ ການມີແອັບພິເຄຊັນສຳລັບມືຖື ແລະ ຫ້ອງແຊັດອອນລາຍ ຫຼື ໃນອະນາຄົດອາດມີຄວາມເປັນໄປໄດ້ ທີ່ຈະຫັນເປັນ ປັນຍາປະດິດ (AI) ເພື່ອຊ່ວຍໃນການແຊັດ "chatbots" ຄືກັບຫຼາຍໆປະເທດ, ແມ່ນສ້າງໂອກາດທີ່ດີໃຫ້ປະຊາຊົນໃນການຂໍ ຄຳປຶກສາທາງດ້ານກົດໝາຍໃນຄັ້ງທຳອິດ.

ອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ກະຊວງ ຍຸຕິທຳ ຈະສືບຕໍ່ເຮັດວຽກຮ່ວມກັນ ເພື່ອພັດທະນາເວັບໄຊ ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ເສີມສ້າງຄວາມອາດສາມາດຂອງ ຫ້ອງການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍເມ ນອກນັ້ນການຂະຫຍາຍການນຳໃຊ້ເວັບໄຊນີ້ ໄປສູ່ຫ້ອງການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍຢູ່ແຂວງອື່ນໆ ກໍ ຖືກຈະພິຈາລະນາພາຍຫຼັງການລິດນຳໃຊ້ຄັ້ງນີ້ສຳເລັດ.

ການຊ່ວຍເຫຼືອທາງດ້ານກົດໝາຍໃນຮູບແບບດິຈິຕອນນີ້ໄດ້ສ້າງຂຶ້ນ ໃຫ້ມີລັກສະນະສະດວກແກ່ຜູ້ນຳໃຊ້ ດ້ວຍການສະໜອງວິທີການນຳໃຊ້ໃຫ້ຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ ລວມທັງວິດີໂອການນຳສະເໜີຂັ້ນຕອນຂອງການເຂົ້າເຖິງ ແລະ ທາງເລືອກໃນການຂໍຄວາມຊ່ວຍເຫຼືອທາງດ້ານກົດໝາຍ. ສຳລັບຜູ້ນຳໃຊ້ ຈະໄດ້ຮັບຂໍ້ມູນກ່ຽວກັບ ການບໍລິການ ການຊ່ວຍເຫຼືອທາງດ້ານກົດໝາຍ, ຂໍ້ມູນຕິດຕໍ່ຂອງຫ້ອງການໃຫ້ການຊ່ວຍເຫຼືອ ແລະ ສາມາດຮ້ອງຂໍການຊ່ວຍເຫຼືອທາງກົດໝາຍຜ່ານອອນລາຍໄດ້ ແລະ ພ້ອມທັງຮັບຄຳປຶກສາໃນແບບໂຕຕອບກັນຜ່ານທາງອອນລາຍໃນຮູບແບບການແຊັດ. ທ່ານສາມາດເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍຜ່ານທາງອອນໄລນີ້ໄດ້ທີ່ເວັບໄຊ:
https://legal-aid.moj.gov.la/

ຂໍ້ມູນເພີ່ມເຕີ່ມກະລຸນາຕິດຕໍ່:
ທ່ານ ນາງ ສົມມະນີ ສີຫາເທບ ພະນັກງານຊ່ຽວຊານໂຄງການ
ໜ່ວຍງານການປົກຄອງ ອົງການສະຫະປະຊາຊາດປະນຳ ສປປ ລາວ
ອີເມວ: sommany.sihathep@undp.org
ເບີໂທຕິດຕໍ່: 020 59999608